# ການຢັ້ງຢືນເຫດການການໃຊ້ຄວາມຮຸນແຮງໃນຄອບຄົວ, ການໃຊ້ຄວາມຮຸນແຮງກັບຄູ່ນັດ, ຫຼືການສະກົດຮອຍ

**ກະຊວງດູແລທີ່ພັກອາໄສ ແລະ ການພັດທະນາເຂດເມືອງແຫ່ງສະຫະຣັຖອາເມລິກາ**
**ຫ້ອງການດູແລທີ່ພັກອາໄສສາທາລະນະ ແລະສຳລັບຊາວອິນດຽນແດງ**

ໝາຍເລກອະນຸມັດ OMB 2577-0249
ໝົດອາຍຸ (02/28/2014)

**ຈຸດປະສົງຂອງຟອມ:** ກົດໝາຍວ່າດ້ວຍການໃຊ້ຄວາມຮຸນແຮງຕໍ່ຜູ້ຍິງ ແລະການປັບປຸງນອຳນາດທີ່ໝອບໝາຍໃນກະຊວງຍຸດຕິທັມ ປີ 2005 (The Violence Against Women and Justice Department Reauthorization Act of 2005: (“VAWA”) ປົກປ້ອງບັນດາຜູ້ເຊົ່າທີ່ມີຄຸນສົມບັດ, ຜູ້ເຂົ້າຮ່ວມ, ແລະຜູ້ສະໝັກ, ແລະສະມາຊິກໃນຄອບຄົວຂອງຜູ້ເຊົ່າ, ຜູ້ເຂົ້າຮ່ວມ, ແລະຜູ້ສະໝັກ ຊຶ່ງຕົກເປັນຜູ້ຮັບເຄາະຂອງເຫດການການໃຊ້ຄວາມຮຸນແຮງໃນຄອບຄົວ, ການໃຊ້ຄວາມຮຸນແຮງກັບຄູ່ນັດ, ຫຼື ການສະກົດຮອຍ ຈາກການຖືກປະຕິເສດການຊ່ວຍເຫຼືອດ້ານທີ່ພັກອາໄສ, ການຟ້ອງຂັບໄລ່, ຫຼື ຖືກຍຸດຕິບໍ່ໃຫ້ຮັບການຊ່ວຍເຫຼືອດ້ານທີ່ພັກອາໄສ ຊຶ່ງມີພື້ນຖານຈາກການກະທຳການໃຊ້ຄວາມຮຸນແຮງດັ່ງກ່າວຕໍ່ເຂົາເຈົ້າ.

**ການນຳໃຊ້ຟອມນີ້:** ນີ້ແມ່ນແບບຟອມທີ່ເປັນທາງເລືອກ. PHA, ເຈົ້າຂອງ ຫຼື ຕົວແທນການຈັດການ ສະແດງເອກະສານການຮຽກຮ້ອງສຳລັບການສືບຕໍ່ເປັນຜູ້ເຊົ່າ ຫຼື ເປັນຜູ້ເຊົ່າທຳອິດ ຫຼື ການຊ່ວຍເຫຼືອ ອີງຕາມສະຖານະທີ່ຜູ້ຮັບເຄາະຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງກັບຄູ່ນັດ ຫຼື ການສະກົດຮອຍ (ໃນບ່ອນນີ້ແມ່ນອ້າງເຖິງໃນຖານະ “ຜູ້ຮັບເຄາະ”) ມີທາງເລືອກໃນການຮ້ອງຂໍເອົາເອກະສານຜູ້ຮັບເຄາະ ຫຼື ໃຫ້ເອກະສານຫຼັກຖານເພື່ອສະແດງວ່າ ໄດ້ມີການໃຊ້ຄວາມຮຸນແຮງເກີດຂຶ້ນ. ຜູ້ຮັບເຄາະມີທາງເລືອກທີ່ຈະສົ່ງແບບຟອມນີ້ ຫຼື ສົ່ງເອກະສານໃຫ້ແກ່ບຸກຄົນທີສາມ, ດັ່ງເຊັ່ນ:

(1) ຕຳຫຼວດຂອງຣັຖບານກາງ, ຣັຖ, ຊົນເຜົ່າ, ເຂດແດນ ຫຼື ຕຳຫຼວດທ້ອງຖິ່ນ ຫຼື ບັນທຶກຂອງສານ; ຫຼື

(2) ເອກະສານເຊັນຊື່ໃສ່ໂດຍພະນັກງານ, ຕົວແທນ ຫຼື ອາສາສະໝັກຂອງຜູ້ໃຫ້ບໍລິການຊ່ວຍເຫຼືອຜູ້ຮັບເຄາະ, ທະນາຍຄວາມ ຫຼື ເຈົ້າໜ້າທີ່ທາງການແພດ, ຈາກບຸກຄົນຜູ້ທີ່ຜູ້ຮັບເຄາະໄດ້ຊອກເອົາການຊ່ວຍເຫຼືອນຳໃນການແກ້ໄຂບັນຫາຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງກັບຄູ່ນັດ ຫຼື ການສະກົດຮອຍ ຫຼື ຜົນກະທົບຂອງການຂົ່ມເຫັງ, ຊຶ່ງເຈົ້າໜ້າທີ່ມືອາຊີບຮັບຮອງພາຍໃຕ້ຂໍ້ກົດໝາຍວ່າດ້ວຍໂທດຂອງການຕົວະ (28 U.S.C. 1746) ດ້ວຍຄວາມເຊື່ອຂອງເຈົ້າໜ້າທີ່ມືອາຊີບວ່າ ເຫດການ ຫຼື ເຫດການທີ່ໜ້າສົງໃສຕ່າງໆ ແມ່ນເຫດການການຂົ່ມເຫັງຈິງແທ້, ແລະຜູ້ຮັບເຄາະໃນເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງກັບຄູ່ນັດ, ຫຼື ການສະກົດຮອຍ ໄດ້ເຊັນຊື່ ຫຼື ຮັບຮອງຕໍ່ເອກະສານ.

ຖ້າວ່າ ແບບຟອມນີ້ຖືກນຳໃຊ້ໂດຍຜູ້ຮັບເຄາະ, ຜູ້ຮັບເຄາະຕ້ອງປະກອບຟອມໃຫ້ຄົບຖ້ວນ ແລະສົ່ງຟອມພາຍໃນ 14 ວັນເຮັດວຽກ ນັບແຕ່ວັນທີ່ໄດ້ຮັບຟອມຈາກ PHA, ເຈົ້າຂອງ ຫຼື ຕົວແທນການຈັດການ. ຟອມນີ້ຕ້ອງໄດ້ສົ່ງກັບຄືນໄປທີ່ບຸກຄົນ ແລະທີ່ຢູ່ທີ່ບົ່ງໄວ້ໃນເອກະສານຄຳຮ້ອງເພື່ອການຢັ້ງຢືນ. ຖ້າວ່າ ຜູ້ຮັບເຄາະບໍ່ປະກອບຟອມໃຫ້ຄົບຖ້ວນ ແລະບໍ່ສົ່ງກັບຄືນ (ຫຼື ບໍ່ຈັດຫາຫຼັກຖານຢັ້ງຢືນຂອງບຸກຄົນທີສາມ) ພາຍໃນ 14 ວັນເຮັດວຽກ ຫຼື ພາຍໃນວັນທີ່ທີ່ຍືດເວລາໃຫ້ໂດຍ PHA, ຕົວແທນການຈັດການ ຫຼື ເຈົ້າຂອງ, ຜູ້ຮັບເຄາະຈະບໍ່ຖືກຮັບຮອງວ່າ ລາວຈະໄດ້ຮັບການຄຸ້ມຄອງຈາກ VAWA.

ຖ້າວ່າ ຜູ້ຮັບເຄາະສົ່ງຟອມນີ້, ທາງ PHA, ເຈົ້າຂອງ ຫຼື ຕົວແທນການຈັດການ ບໍ່ສາມາດຮຽກຮ້ອງເອົາຫຼັກຖານເພີ່ມເຕີມໃດໆ ຈາກຜູ້ຮັບເຄາະໄດ້.

**ການຮັກສາຄວາມລັບ:** ຂໍ້ມູນທັງໝົດທີ່ຈັດຫາໃຫ້ແກ່ PHA, ເຈົ້າຂອງ ຫຼື ຕົວແທນການຈັດການ ຊຶ່ງກ່ຽວພັນກັບເຫດການການໃຊ້ຄວາມຮຸນແຮງໃນຄອບຄົວ, ການໃຊ້ຄວາມຮຸນແຮງກັບຄູ່ນັດ, ຫຼື ການສະກົດຮອຍຕາມ ທີ່ກ່ຽວພັນກັບຜູ້ຮັບເຄາະ ຄວນຈະຖືກເກັບຮັກສາໄວ້ເປັນຄວາມລັບໂດຍ PHA, ເຈົ້າຂອງ ຫຼື ຕົວແທນການຈັດການ, ແລະ ລາຍລະອຽດດັ່ງກ່າວບໍ່ຄວນເອົາໃສ່ຖານຂໍ້ມູນໃດໆ ທີ່ມີການແບ່ງປັນຕໍ່ຜູ້ອື່ນໆ. ພະນັກງານຂອງ PHA, ເຈົ້າຂອງ, ຫຼື ຕົວແທນການຈັດການ ຕ້ອງບໍ່ເຂົ້າເບິ່ງລາຍລະອຽດເຫຼົ່ານີ້ ເວັ້ນແຕ່ວ່າ ເພື່ອຊອກຫາເອົາ ຫຼື ປະຕິເສດການຄຸ້ມຄອງ VAWA ຕໍ່ຜູ້ຮັບເຄາະ; ແລະບໍ່ສາມາດເປີດເຜີຍຂໍ້ມູນີ້ຕໍ່ຜູ້ໃດໆ ຫຼື ບຸກຄົນໃດໆ, ຍົກເວັ້ນແຕ່ໃນຂອບເຂດວ່າ ການເປີດເຜີຍນັ້ນແມ່ນ: (i) ໄດ້ຮັບການຍິນຍອມໂດຍຜູ້ຮັບເຄາະເປັນລາຍລັກອັກສອນ; (ii) ໄດ້ຖືກຮຽກຮ້ອງເພື່ອການນຳໃຊ້ໃນການດຳເນີນການຟ້ອງຂັບໄລ່; ຫຼື (iii) ບໍ່ດັ່ງນັ້ນ ຖືກຮຽກຮ້ອງໂດຍກົດໝາຍທີ່ກ່ຽວຂ້ອງ.

---

<u>ສຳລັບປະກອບຂໍ້ມູນໃສ່ໂດຍຜູ້ຮັບເຄາະຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງກັບຄູ່ນັດ, ຫຼື ການສະກົດຮອຍ:</u>

ລົງວັນທີທີ່ເອກະສານຄຳຮ້ອງໄດ້ຮັບໂດຍຜູ້ຮັບເຄາະ: ____________________

ຊື່ຂອງຜູ້ຮັບເຄາະ: ____________________

ຊື່ຂອງສະມາຊິກອື່ນໆໃນຄອບຄົວທີ່ມີຊື່ລະບຸຢູ່ໃນສັນຍາເຊົ່າ: ____________________
____________________

ຊື່ຂອງຜູ້ກະທຳຜິດ: ____________________

ຄວາມສຳພັນຂອງຜູ້ກະທຳຜິດຕໍ່ຜູ້ຮັບເຄາະ: ____________________

ວັນທີທີ່ເກີດເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງກັບຄູ່ນັດ ຫຼື ການສະກົດຮອຍຕາມ: ____________________
____________________

ສະຖານທີ່ທີ່ເກີດເຫດການ:
____________________
____________________

ລາຍລະອຽດຂອງເຫດການ (ລາຍລະອຽດນີ້ອາດຖືກນຳໃຊ້ໂດຍ PHA, ເຈົ້າຂອງ ຫຼື ຕົວແທນການຈັດການ ເພື່ອຈຸດປະສົງໃນການຟ້ອງຂັບໄລ່ຜູ້ກະທຳຜິດ. ກະຣຸນາໃຫ້ລາຍລະອຽດຫຼາຍເທົ່າທີ່ເປັນໄປໄດ້.) :

[ໃສ່ຂໍ້ມູນບ່ອນນີ້]

ຢູ່ບ່ອນນີ້ ຂ້າພະເຈົ້າຮັບຮອງວ່າ ຂໍ້ມູນທີ່ຂ້າພະເຈົ້າຈັດຫາໃຫ້ນັ້ນແມ່ນຄວາມຈິງ ແລະຖືກຕ້ອງ ແລະຂ້າພະເຈົ້າເຊື່ອ, ອີງຕາມຂໍ້ມູນທີ່ຂ້າພະເຈົ້າໄດ້ໃຫ້ນັ້ນ, ວ່າ ຂ້າພະເຈົ້າແມ່ນຜູ້ຮັບເຄາະໃນເຫດການການໃຊ້ຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງກັບຄູ່ນັດ, ຫຼື ການສະກົດຮອຍຕາມ ແລະວ່າ ເຫດການທີ່ໜ້າສົງໃສນັ້ນ ແມ່ນ ເຫດການການຂົ່ມເຫັງ ຫຼື ການຂົ່ມຂູ່ຈິງແທ້. ຂ້າພະເຈົ້າຮັບຮູ້ວ່າ ການໃຫ້ຂໍ້ມູນທີ່ບໍ່ຈິງແມ່ນພື້ນຖານຕໍ່ການຖືກປະຕິເສດ, ການຖືກຍຸດຕິຄວາມຊ່ວຍເຫຼືອ, ຫຼື ການຟ້ອງຂັບໄລ່.

ລາຍເຊັນ ________________________________________ ວັນທີລົງລາຍເຊັນ (ວັນທີ) ________________________________

**ພາລະໃນການລາຍງານຕໍ່ສາທາລະນະ** ສຳລັບການເກັບກຳຂໍ້ມູນແມ່ນຄາດວ່າຈະສະເຫຼ່ຍ 1 ຊົ່ວໂມງຕໍ່ຄົນ. ອັນນີ້ລວມເຖິງ ເວລາສຳລັບການເກັບກຳ, ການກວດກາຄືນ, ແລະການລາຍງານຂໍ້ມູນ. ຂໍ້ມູນທີ່ສະໜອງໃຫ້ແມ່ນເພື່ອນຳໃຊ້ໂດຍ PHA ແລະພາກສ່ວນທີ 8 ກ່ຽວກັບເຈົ້າຂອງ ຫຼື ຕົວແທນການຈັດການ ເພື່ອຮຽກຮ້ອງໃຫ້ຜູ້ເຊົ່າໃຫ້ຮັບຮອງວ່າ ບຸກຄົນທີ່ເປັນຜູ້ຮັບເຄາະໃນເຫດການການໃຊ້ຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງຕໍ່ຄູ່ນັດ ຫຼື ການສະກົດຮອຍຕາມ. ຂໍ້ມູນແມ່ນຢູ່ພາຍໃຕ້ຂໍ້ກຳນົດການຮັກສາຄວາມລັບຂອງຮ່າງກົດໝາຍປະຕິຮູບ HUD. ອົງກອນນີ້ບໍ່ສາມາດເກັບຂໍ້ມູນນີ້ໄວ້ໄດ້, ແລະທ່ານບໍ່ຈຳເປັນຕ້ອງປະກອບຟອມນີ້ກໍໄດ້ ເວັ້ນແຕ່ວ່າ ມັນສະແດງວ່າມີນ້ຳເບີຄວບຄຸມ OMB ໃນປັດຈຸບັນທີ່ໃຊ້ການໄດ້.